ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2024




ໂດຍປະຕິບັດຕາມລະບອບການປະຊຸມຂອງສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ (ທຫລ) ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ. ໃນຕອນເຊົ້າຂອງວັນທີ 05 ມີນາ 2024 ທີ່ ທຫລ ໄດ້ໄຂກອງປະຊຸມສະພາບໍລິຫານ ຄັ້ງທີ I ປະຈຳປີ 2024 ໂດຍການເປັນປະທານຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທຫລ, ປະທານສະພາບໍລິຫານ ທຫລ, ຮອງປະທານສະພາບໍລິຫານ, ບັນດາກຳມະການສະພາບໍລິຫານ ທຫລ, ຮອງຜູ້ວ່າການ ທຫລ ແລະ ຄະນະກົມຂອງ ທຫລ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ເພື່ອຄົ້ນຄວ້າພິຈາລະນາຮັບຮອງເອກະສານສຳຄັນຈຳນວນໜຶ່ງ ເປັນຕົ້ນແມ່ນ: ການສະຫຼຸບການເຄື່ອນໄຫວວຽກງານຂອງ ທຫລ ປະຈຳປີ 2023 ແລະ ທິດທາງແຜນການປີ 2024, ການຈັດຕັ້ງປະຕິບັດແຜນເງິນຕາ ປີ 2023 ແລະ ແຜນເງິນຕາ ປີ 2024, ການສະຫຼຸບແຜນງົບປະມານປີ 2023 ແລະ ຄາດຄະເນແຜນງົບປະມານປີ 2024. ຕະຫຼອດໄລຍະປີ 2023 ກອງປະຊຸມໄດ້ຕີລາຄາວ່າ ທຫລ ໄດ້ສູ້ຊົນບຸກບືນຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການຕ່າງໆ ເພື່ອຮັກສາສະຖຽນລະພາບທາງດ້ານເງິນຕາການເງິນ, ລວມທັງວຽກງານຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຮັບປະກັນການຕິດຕາມກະແສເງິນຕາຕ່າງປະເທດເຂົ້າ-ອອກ ສປປ ລາວ, ພັດທະນາລະບົບການຊຳລະ ເພື່ອຮອງຮັບການຊຳລະຄ່າສິນຄ້າ-ບໍລິການຜ່ານລະບົບທະນາຄານ ແລະ ຈັດຕັ້ງປະຕິບັດວຽກງານອື່ນໆ ຕາມມະຕິຂອງກອງປະຊຸມສະພາບໍລິຫານ ທຫລ ກໍຄືການມອບໝາຍຂອງລັດຖະບານ ດ້ວຍຄວາມເປັນເຈົ້າ

ການ ແລະ ຮັບຜິດຊອບສູງ ຊຶ່ງໂດຍລວມເຫັນວ່າ: ແຕ່ລະວຽກງານສາມາດບັນລຸໄດ້ຕາມຄາດໝາຍທີ່ວາງໄວ້ດີພໍສົມຄວນ.




ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນ, ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານຂອງແຕ່ລະໜ້າວຽກ ແລະ ມີການຄົ້ນຄວ້າປະກອບຄຳຄິດຄຳເຫັນຕໍ່ກັບເນື້ອໃນຂອງກອງປະຊຸມຢ່າງກົງໄປກົງມາ ເພື່ອເຮັດໃຫ້ແຕ່ລະບັນຫາທີ່ຍົກຂຶ້ນມີວິທີທາງອອກທີ່ເໝາະສົມ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ເກີດໝາກຜົນຕົວຈິງ.

**# ຂ່າວ-ພາບ: ວັນປະເສີດ ສົມບຸນຂັນ.**

**ຊາດພັດທະນາພາເສດຖະກິດກ້າວໄກພ້ອມກັນນຳໃຊ້ເງິນກີບ**